ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# 3 ກົມ ຂອງ ທຫລ ຈັດຕັ້ງການເຊື່ອມຊຶມມະຕິ ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV




ໃນຕອນເຊົ້າຂອງວັນທີ 14 ທັນວາ 2020 ທີ່ ສະໂມສອນສະຖາບັນການທະນາຄານ, ອົງຄະນະພັກ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການເຜີຍແຜ່ຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV ແລະ ເຊື່ອມຊຶມມະຕິ, ບັນດາເອກະສານສຳຄັນຕ່າງໆທີ່ຕິດພັນ. ໂດຍການໃຫ້ກຽດເປັນປະທານຂອງສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງົາ ກຳມະການປະຈຳພັກ, ຫົວໜ້າກົມບັນຊີແລະການເງິນ ແລະ ພ້ອມດ້ວຍການເຂົ້າຮ່ວມຮັບຟັງຂອງສະຫາຍ ເພັດສະຖາພອນ ແກ້ວວົງວິຈິດ ເລຂາໜ່ວຍພັກຫ້ອງການ ທຫລ, ທ່ານ ໄຊລືຊາ ຜູຍຍະວົງ ເລຂາໜ່ວຍພັກກົມນິຕິກຳ ທຫລ ແລະ ຄະນະໜ່ວຍພັກ, ພະນັກງານຂອງກົມບັນຊີແລະການເງິນ, ຫ້ອງການ ທຫລ ແລະ ກົມນິຕິກຳ ເຂົ້າຮ່ວມ.

ສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງົາ ກຳມະການປະຈຳພັກ ໄດ້ຍົກໃຫ້ເຫັນເຖິງຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV ທີ່ຜ່ານມາ ເຊິ່ງມີບັນດາຜົນສຳເລັດຫຼາຍດ້ານທີ່ຄະນະພັກ-ຄະນະນຳ ແລະ ສະມາຊິກພັກ ທຫລ ໃນສະໄໝທີ III ສາມາດຍາດມາໄດ້ໃນໄລຍະຜ່ານມາ ແລະ ບາງຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ບຸກບືນໃຫ້ໄດ້ຜົນສຳເລັດໃນສະໄໝທີ IV. ພ້ອມນີ້, ຍັງໄດ້ເນັ້ນໜັກກ່ຽວກັບຍຸດທະສາດພັດທະນາລະບົບສະຖາບັນການເງິນ-ເງິນຕາໃນ 5 ປີ ຕໍ່ໜ້າ (ປີ 2021-2025) ຊຶ່ງແຜນດັ່ງກ່າວໄດ້ກຳນົດວິໄສທັດຄື: “ຮັບປະກັນສະເຖຍລະພາບດ້ານເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ, ພັດທະນາລະບົບສະຖາບັນການເງິນ-ເງິນຕາ ໃຫ້ເຂັ້ມແຂງ-ໝັ້ນຄົງ ແລະ ສາມາດແຂ່ງຂັນໃນເງື່ອນໄຂການເຊື່ອມໂຍງກັບສາກົນ”; ກຳນົດທິດທາງລວມ, ຄາດໝາຍສູ້ຊົນ ແລະ 4 ຍຸດທະສາດຫຼັກ ຄື: ຮັກສາສະເຖຍລະພາບດ້ານເງິນຕາໃຫ້ໝັ້ນທ່ຽງ ຍາວນານ; ພັດທະນາລະບົບສະຖາບັນການເງິນ-ເງິນຕາໃຫ້ເຂັ້ມແຂງ-ໝັ້ນຄົງ; ພັດທະນາລະບົບການຊຳລະແຫ່ງຊາດໃຫ້ເປັນສູນກາງຊຳລະທີ່ທັນສະໄໝ ແລະ ປອດໄພ ແລະ ພັດທະນາລະບົບພື້ນຖານໂຄງລ່າງຂອງລະບົບສະຖາບັນການເງິນ-ເງິນຕາ ໃຫ້ສອດຄ່ອງກັບຫຼັກການລວມຂອງສາກົນ ແລະ ເງື່ອນໄຂຂອງປະເທດ. ໃນໂອກາດນີ້ ສະຫາຍໄດ້ຮຽກຮ້ອງໃຫ້ບັນດາຄະນະນຳ, ສະມາຊິກພັກ ແລະ ພະນັກງານທຸກທົ່ວໜ້າຂອງ ທຫລ ຈົ່ງໄດ້ນຳໄປຜັນຂະຫຍາຍເປັນແຜນງານໂຄງການອັນສະເພາະຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້. ນອກຈາກນີ້; ໃນຕົ້ນເດືອນທັນວາ ທີ່ຜ່ານມາ ບັນດາຄະນະໜ່ວຍພັກ-ຄະນະພັກ ທຫລ; ຄະນະພັກຮາກຖານ; ສາຂາ ທຫລ ແລະ ທະນາຄານທຸລະກິດ ກໍໄດ້ຈັດຕັ້ງການເຜີຍແຜ່ຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV ດ້ວຍບັນຍາກາດຟົດຟື້ນ ແລະ ມີຄວາມໝາຍສຳຄັນ.







# ຂ່າວ-ພາບ: ນ. ວັນປະເສີດ ສີມບູນຂັນ

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ